ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 156/ນຍ

ນະຄອນຫລວງວຽງຈັນ, ວັນທີ 14-10-2004

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະປະກາດໃຊ້

## ນະໂຍບາຍແຫ່ງຊາດ ເພື່ອຜູ້ອາຍຸສູງ ຢູ່ ສປປລາວ.

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປລາວ.
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ອີງຕາມ ເອກະສານສະເໜີ ຂອງກະຊວງແຮງງານແລະສະຫວັດດີການສັງຄົມ ສະບັບເລກທີ 2309/ຮສສ. ລົງວັນທີ 9 ກັນຍາ 2004.

## ນາຍົກລັດຖະມົນຕີ ອອກດຳລັດ

<u>ມາດຕາ 1</u> : ຮັບຮອງແລະປະກາດໃຊ້ ນະໂຍບາຍແຫ່ງຊາດ ເພື່ອຜູ້ອາຍຸສູງ ຢູ່ ສປປລາວ ຕາມທີ່ລັດຖະມົນຕີວ່າການກະຊວງແຮງງານແລະສະຫວັດດີການສັງຄົມ ໄດ້ລົງລາຍເຊັນ ເລກທີ 2822/ຮສສ. ລົງວັນທີ 8 ຕຸລາ 2004.

<u>ມາດຕາ 2</u> : ມອບໃຫ້ ກະຊວງແຮງງານ ແລະສະຫວັດດີການສັງຄົມ, ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ສົມທົບກັບພາກສ່ວນກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດນະ ໂຍບາຍແຫ່ງຊາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

<u>ມາດຕາ 3</u> : ບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ແຂວງ, ນະຄອນຫລວງວຽງຈັນ, ເຂດພິເສດ ແລະພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

<u>ມາດຕາ 4</u> : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປລາວ

ບຸນຍັງ ວໍລະຈິດ